**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງອັດຕະປື

ພະແນກສຶກສາທິການ ແລະ ກິລາແຂວງ

ເລກທີ.....189..../ສກຂ

ອັດຕະປື, ວັນທີ: 11 ກັນຍາ 2025

# ແຈ້ງການ

ເຖິງ: ບັນດານັກຮຽນທີ່ຮຽນຈົບ ມ.7 ໃນທົ່ວແຂວງ ອັດຕະປື

ເລື່ອງ: ຮັບສະໝັກເອົານັກຮຽນຜູ້ທີ່ມີຄວາມສົນໃຈຢາກໄປຮຽນຕໍ່ວິຊາສະເພາະໃນລະດັບປະລິນຍາຕີຢູ່ໃນ 04 ມະຫາວິທະຍາໄລພາຍໃນປະເທດ, ປະຈຳສົກປີຮຽນ 2025 – 2026 (ທຶນໃນແຜນຮັບເບ້ຍລ້ຽງຈາກລັດຖະບານ).

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງ ສຶກສາທິການ ແລະ ກິລາ ສະບັບເລກທີ 1441/ສສກ, ລົງວັນທີ 19 ເມສາ 2022 ວ່າດ້ວຍການຈັດຕັ້ງແລະເຄື່ອນໄຫວຂອງພະແນກ ສຶກສາທິການແລະ ກິລາ, ນະຄອນຫຼວງ;
- ອີງຕາມ ຂໍ້ຕົກລົງທ່ານເຈົ້າແຂວງສະບັບເລກທີ 926/ຈຂອປ, ລົງວັນທີ 14 ກໍລະກົດ 2025 ວ່າດ້ວຍ ແຕ່ງຕັ້ງຄະນະກຳມະການ ແລະ ກອງເລຂາຄົ້ນຄວ້າຄັດເລືອກ ແລະ ສົບຊ້ອນພະນັກງານ ແລະ ນັກຮຽນໄປຮຽນຕໍ່ພາຍໃນ ແລະ ຕ່າງປະເທດ ປະຈຳສົກຮຽນ 2025 – 2026.
- ອີງຕາມ ແຈ້ງການຂອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 1684/ສສກ, ລົງວັນທີ 08 ກັນຍາ 2025 ວ່າດ້ວຍການຈັດຕັ້ງປະຕິບັດແຜນແບ່ງປັນສົບຊ້ອນນັກຮຽນ-ນັກສຶກສາ ແລະ ພະນັກງານລັດຖະກອນເຂົ້າຮຽນພາຍໃນປະເທດ ສຳລັບສົກຮຽນ 2025 - 2026.

ພະແນກສຶກສາທິການ ແລະ ກິລາແຂວງ ຂໍແຈ້ງການມາຍັງບັດດານັກຮຽນທີ່ຮຽນຈົບຊັ້ນ ມ.7 ໃນທົ່ວແຂວງອັດຕະປື ຊາບວ່າ: ພະແນກສຶກສາທິການ ແລະ ກິລາແຂວງໄດ້ເປີດຮັບຄຳຮ້ອງສະໝັກເອົານັກຮຽນຜູ້ທີ່ມີຄວາມສົນໃຈຢາກໄປຮຽນຕໍ່ໃນລະດັບປະລິນຍາຕີຢູ່ໃນ 04 ມະຫາວິທະຍາໄລພາຍໃນປະເທດ, ປະຈຳສົກປີຮຽນ 2025 – 2026 (ທຶນໃນແຜນຮັບເບ້ຍລ້ຽງຈາກລັດຖະບານ), ເຊິ່ງມີລາຍລະອຽດລຸ່ມນີ້:

**I. ບ່ອນຮຽນ ແລະ ສາຂາວິຊາຮຽນ:**

**1. ບ່ອນຮຽນແມ່ນມີ 04 ມະຫາວິທະຍາໄລດັ່ງລຸ່ມນີ້:**

1.1. ມະຫາວິທະຍາໄລ ແຫ່ງຊາດ;

1.2. ມະຫາວິທະຍາໄລ ສຸພານຸວົງ;

1.3. ມະຫາວິທະຍາໄລ ສະຫວັນນະເຂດ;

1.4. ມະຫາວິທະຍາໄລ ຈຳປາສັກ.

2. **ສາຂາວິຊາຮຽນ:**

ສາຂາວິຊາຮຽນແມ່ນໃຫ້ເລືອກສາຍວິຊາຮຽນຕາມທີ່ມີຢູ່ໃນ 04 ມະຫາວິທະຍາໄລ, ຍົກເວັ້ນສາຂາວິຊາໃນຄະນະເສດຖະສາດ-ບໍລິຫານທຸລະກິດ, ສາຂາພາສາອັງກິດທົ່ວໄປໃນຄະນະອັກສອນສາດໃນ 04 ມະຫາວິທະຍາໄລ ແລະ ຄູພາສາຈີນຂອງສະຖາບັນຂົງຈື້ມະຫາວິທະຍາໄລແຫ່ງຊາດ ແລະ ມະຫາວິທະຍາໄລ ສຸພານຸວົງ ເພາະສາຂາດັ່ງກ່າວແມ່ນເປັນຕົວເລກຈ່າຍຄ່າຮຽນດ້ວຍຕົນເອງ.

**II. ເງື່ອນໄຂ:**

1. ຕ້ອງແມ່ນນັກຮຽນທີ່ມີຄຸນສົມບັດດີ, ມີຄວາມດຸໝັ່ນໃນການຮຽນຮູ້, ມີຄວາມຕັ້ງໃຈ, ຜູ້ທີ່ມີຜົນການຮຽນດີ, ຜູ້ດ້ອຍໂອກາດຈາກຄອບຄົວທຸກຍາກ ແລະ ເຂດຫ່າງໄກສອກຫຼີກ (ເພດຍິງ, ຊົນເຜົ່າ);
2. ຜູ້ທີ່ຮຽນຈົບຊັ້ນມັດທະຍົມຕອນປາຍຢູ່ບັນດາໂຮງຮຽນແຫ່ງຕ່າງໆພາຍໃນແຂວງ ອັດຕະປື ແລະ ຕ້ອງມີຄະແນນສອບເສັງຈົບຊັ້ນມັດທະຍົມຕອນປາຍສະເລ່ຍຕ້ອງແມ່ນ 7 ຂຶ້ນໄປ, ຄະແນນຂອງແຕ່ລະວິຊາບໍ່ໃຫ້ຫຼຸດ 6;
3. ມີສຸຂະພາບແຂງແຮງ ແລະ ສົມບູນດີ;
4. ຄອບຄົວຕ້ອງມີຄວາມພ້ອມຮັບປະກັນໃນການສົ່ງເສີມລູກຫຼານໃຫ້ຮຽນຈົບ.

**III. ວັນເວລາເປີດ-ປິດ ແລະ ສະຖານທີ່ຮັບສະໝັກຄຳຮ້ອງ:**

ເລີ່ມຮັບຄຳຮ້ອງສະໝັກ **ແຕ່ວັນທີ 11-19 ກັນຍາ 2025**, ສະຖານທີ່ຂະແໜງສະຖິຕິ, ແຜນການ ແລະ ຮ່ວມມືກັບຕ່າງປະເທດ ພະແນກສຶກສາທິການ ແລະ ກິລາແຂວງ ຕາມໂມງລັດຖະການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງນັກຮຽນທີ່ມີຄວາມສົນໃຈຢາກໄປຮຽນຕໍ່ຮັບຊາບ.

**ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ**

(ຮອງປະທານຄະນະກຳມະການ ຄັດເລືອກ ແລະ ສັບຊ້ອນຂັ້ນແຂວງ)

ພະແນກ ສຶກສາທິການ ແລະ ກິລາ ແຂວງອັດຕະປື

ອຸດົມສິນ ສີຊານົນ

ຕິດຕໍ່ພົວພັນລາຍລະອຽດຕື່ມນຳກອງເລຂາ:
ນາງ ທິບພະພອນ ພະຊົນນະບານ
ເບີໂທ ແລະ Whatsapp 020 9884 8898